# ທະນາຄານຫຸ້ນສ່ວນອຸດສາຫະກຳ-ການຄ້າຫວຽດນາມ ໄດ້ເປີດບໍລິການຢ່າງເປັນທາງການແລ້ວ




ໃນຕອນບ່າຍຂອງວັນທີ 9 ກຸມພາ ຜ່ານມານີ້, ທີ່ສຳນັກງານທະນາຄານຫຸ້ນສ່ວນອຸດສາຫະກຳ-ການຄ້າຫວຽດນາມ (Vietin Bank) ໄດ້ຈັດພິທີເປີດການບໍລິການຢ່າງເປັນທາງການ ໂດຍການເປັນກຽດເຂົ້າຮ່ວມຂອງທ່ານ ເຈືອງເຕິ່ນຊາງ ກຳມະການກົມການເມືອງສູນກາງພັກຄອມມູນິດຫວຽດນາມ, ປະທານປະເທດແຫ່ງ ສສ ຫວຽດນາມ, ທ່ານ ດຣ ທອງລຸນ ສີສຸລິດ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ, ພ້ອມນີ້ກໍມີບັນດາສະຫາຍກົມການເມືອງສູນກາງພັກ, ບັນດາກຳມະການສູນກາງພັກ, ລັດຖະມົນຕີວ່າການ ແລະ ຊ່ວຍວ່າການ, ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ຮອງຜູ້ວ່າການທະນາຄານແຫ່ງລັດ ສສ ຫວຽດນາມ, ປະທານສະພາບໍລິຫານທະນາຄານຫວຽດຕິນ ແລະ ພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ທະນາຄານຫຸ້ນສ່ວນອຸດສາຫະກຳການຄ້າຫວຽດນາມ (ຫວຽດຕິນແບງ) ໄດ້ຮັບການສ້າງຕັ້ງຂຶ້ນໃນປີ 1988 ເຊິ່ງໄດ້ແຍກຕົວອອກຈາກທະນາຄານແຫ່ງລັດຫວຽດນາມ, ເປັນກຸ່ມການເງິນອັນດັບນຳໜ້າຂອງຫວຽດນາມ ແລະ ໄດ້ເຄື່ອນໄຫວໃນຫຼາຍຮູບແບບ, ສະໜອງຜະລິດຕະພັນ ແລະ ການບໍ

ລິການທີ່ໄດ້ມາດຕະຖານດ້ວຍວິໄສທັດທີ່ກວ້າງໄກ, ເປັນກຸ່ມການເງິນທີ່ທັນສະໄໝ, ເປັນໜຶ່ງໃນ 500 ວິສາຫະກິດທີ່ຍິ່ງໃຫຍ່ທີ່ສຸດຂອງຫວຽດນາມ ໄດ້ຮັບ 2 ລາງວັນ (ດາວຄໍາແຜ່ນດິນຫວຽດ) ຊັບສິນລວມມາຮອດວັນທີ 31/12/2011 ແມ່ນ 21,5 ຕື້ໂດລາສະຫະລັດ, ທຶນຈົດທະບຽນປີ 2011 ມີ 962 ລ້ານໂດລາ, ທຶນທີ່ເປັນກໍາມະສິດບັນລຸ 1,236 ຕື້ໂດລາສະຫະລັດ, ອັດຕາຜົນກໍາໄລໃນທຶນກໍາມະສິດຂອງທະນາຄານໃນປີ 2011 ມີ 30%, ອັດຕາຄວາມປອດໄພທຶນໃນປີ 2011 ມີ 10% ແລະ ມີລັດຖະບານຖືຫຸ້ນ 80%. ສໍາລັບສາຂາຢູ່ ສປປ ລາວ, ທະນາຄານຫວຽດຕິນ ຈະເຮັດໜ້າທີ່ບໍລິການໂອນເງິນ, ທຸລະກິດຊື້-ຂາຍເງິນຕາຕ່າງປະເທດ, ບໍລິການບັນຊີ ແລະ ເງິນຝາກປະຢັດ ແລະ ການບໍລິການໃຫ້ກູ້ຢືມ ໂດຍຍຶດໝັ້ນພາຍໃຕ້ຄໍາຂວັນ “ປອດໄພ, ມີປະສິດທິຜົນ, ໝັ້ນຄົງ ແລະ ມາດຕະຖານສາກົນ”.

ສໍາລັບສາຂາຢູ່ ສປປ ລາວ ມີສໍານັກງານຕັ້ງຢູ່ບ້ານວັດຈັນທ່າເມືອງຈັນທະບູລີນະຄອນຫຼວງວຽງຈັນ ເຊິ່ງເປັນບາດກ້າວເບື້ອງຕົ້ນຂອງການຂະຫຍາຍທຸລະກິດຂອງທະນາຄານຫວຽດຕິນຢູ່ ສປປ ລາວ ແລະ ໃນອະນາຄົດນີ້ຍັງຈະຂະຫຍາຍສາຂາໄປສູ່ບັນດາແຂວງພາກໃຕ້-ພາກເໜືອຂອງ ສປປ ລາວ ເຊິ່ງຈະສ້າງເງື່ອນໄຂສະດວກໃຫ້ແກ່ຊຸມຊົນຊາວຫວຽດນາມ ຢູ່ໃນ ສປປ ລາວ, ບັນດາບຸກຄົນ ແລະ ວິສາຫະກິດໃນ ສປປ ລາວ ທີ່ຈະມີການບໍລິການໂອນເງິນທຸລະກິດຊື້-ຂາຍເງິນຕາຕ່າງປະເທດ, ບໍລິການບັນຊີ ແລະ ເງິນຝາກປະຢັດການບໍລິການໃຫ້ກູ້ຢືມ ແລະ ອື່ນໆ.